Ottawa County Health Department

# ຄວາມຈິງຕໍ່ມວນຊົນ

## ໄຂ້ເຫລືອງ [YELLOW FEVER]

**ໄຂ້ເຫລືອງຄືຫຍັງ?**

ໄຂ້ເຫລືອງເປັນພະຍາດທີ່ເກີດຈາກວາຍຣັສ.

**ພະຍາດໄຂ້ເຫລືອງແຜ່ລາມແນວໃດ?**

ໂດຍການຖືກຍຸງກັດທີ່ມີເຊື້ອວາຍຣັສນີ້. ມີຍຸງຫລາຍໃນ ອາຟຣິກາກາງ ລະ ອາເມຣິກາໃຕ້.

**ອາການບາງຢ່າງມີຫຍັງແດ່?**

ອາການອາດຈະຮ່ວມດ້ວຍ:

- ຂັ້ນຕອນທີໜຶ່ງ:
    - ປວດຫົວ, ເຈັບປວດກ້າມເນື້ອ, ເປັນໄຂ້, ບໍ່ຢາກເຂົ້າາປຸ້ນທ້ອງປວດຮາກ, ຮາກ, ຕາ ແລະ ຜິວໜັງເປັນສີເຫລືອງ (ຈອນດີສ).
- ຂັ້ນຕອນທີສອງ:
    - ຄົນສ່ວນຫລາຍຈະເຊົາດີໃນຂັ້ນນີ້,ແຕ່ຄົນອື່ນອາດຈະກາຍມີອາການຂັ້ນທີສາມ.
- ຂັ້ນຕອນທີສາມ:
    - ຕັບ ແລະ ໝາກໄຂຫລັງບໍ່ທຳງານ
    - ເລືອດອອກເຟັ່ນແຂ້ວ
    - ຮາກອອກເປັນເລືອດ
    - ອາຈົມອອກເປັນເລືອດ (ຂີ້)
    - ເປັນບ້າໝູ
    - ນອນໝົດສະຕິ
    - ການຕາຍ

**ຈະກວດພົບໄຂ້ເຫລືອງໄດ້ແນວໃດ?**

ຕ້ອງກວດໃນຫ້ອງວິໄຈ ບອກທ່ານໝໍ່ຂອງທ່ານຖ້າຫາກທ່ານໄປບ່ອນທີ່ມີຄົນເປັນໄຂ້ເຫລືອງ.

**ຈະຮັກສາໄຂ້ເຫລືອງໄດ້ດ້ວຍວິທີໃດ?**

ບໍ່ມີການຮັກສາເຈາະຈົງສຳລັບພະຍາດໄຂ້ເຫລືອງ.

**ຈະປ້ອງກັນຈາກໄຂ້ເຫລືອງດ້ວຍວິທີໃດ?**

- ມີຢາສັກສຳລັບໄຂ້ເຫລືອງ. ຄວນຈະສັກຢາ 10 ຫາ 14 ມື້ກ່ອນທີ່ຈະໄປບ່ອນທີ່ມີໄຂ້ເຫລືອງ.
- ໃຊ້ຢາໄລ່ຍຸງທີ່ມີປະສິດທິພາບ.
- ປົກຄຸມຜິວໜັງດ້ວຍເສື້ອຜ້າ.
- ໃຫ້ນອນກາງມຸ້ງ ຫລື ນອນໃນຫ້ອງແອເຢັນ.

**ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ໄຂ້ເຫລືອງ ໃຫ້ຕິດຕໍ່ໄປທີ່:**

Ottawa County Health Department
www.miOttawa.org
Medline Plus/National Institutes of Health
www.nlm.nih.gov/medlineplus/ency/article/000680.htm

12251 James St., Suite 400
Holland, MI 49424
ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643
ແວບໄຊ: www.miOttawa.org